ພວກເຮົາຮ່ວມມືກັນພາຍໃຕ້ຂອບການຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງມາເປັນເວລາ 10 ປີ

ປີນີ້ແມ່ນກອງປະຊຸມສຸດຍອດວ່າດ້ວຍການຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງຄັ້ງປະຖົມມະລຶກຈັດຂຶ້ນຄົບຮອບ 10 ປີ.

ວັນທີ 23 ມີນາປີ2016, ກົນໄກການຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງໄດ້ເລີ່ມຂຶ້ນຢ່າງເປັນທາງການ, 6 ປະເທດ ໄດ້ຫວ່ານແນວຄວາມສາມັກຄີ,ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ແລະ ຮ່ວມມືກັນແບບຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດຂອງພາກພື້ນ.

10 ປີຜ່ານມາ, 6 ປະເທດ ໄດ້ຮ່ວມມືກັນກ້າວເດີນໄປໜ້າ ແລະ ຮ່ວມທຸກຮ່ວມສຸກ, ໄດ້ຖືເອົາ "ການຮ່ວມຊາຕາກຳ" ເປັນຄວາມອົບອຸ່ນທີ່ຈັບບາຍໄດ້ ແລະ ເຮັດໃຫ້ຜົນການຮ່ວມມືເຊື່ອມໂຍງເຂົ້າກັບຊີວິດການເປັນຢູ່ຂອງປະຊາຊົນ 6 ປະເທດ.

ທ່ານ ອະນົງເດດ ເພັດໄກສອນ ຈາກ ສປປ ລາວ: "ເສັ້ນທາງຄຳດ້ານການຂົນສົ່ງ" ສ້າງໂອກາດໃໝ່ອຸ່ມ

ທ່ານ ອະນົງເດດ ເພັດໄກສອນ ຮອງຜູ້ອຳນວຍການໃຫຍ່ບໍລິສັດທາງລົດໄຟລາວ-ຈີນກ່າວວ່າ: ປີ2021, ເສັ້ນທາງລົດໄຟລາວ-ຈີນໄດ້ເປີດນຳໃຊ້ຢ່າງເປັນທາງການ ເຊິ່ງໄດ້ສ້າງໂອກາດໃໝ່ໃຫ້ແກ່ປະເທດລາວ. ລາວໄດ້ຫັນຈາກ "ປະເທດທີ່ບໍ່ມີຊາຍແດນຕິດກັບທະເລ" ກາຍມາເປັນ "ປະເທດເຊື່ອມໂຍງເຊື່ອມຈອດຂອງພາກພື້ນ" ແລະ ໄດ້ກ້າວເຂົ້າສູ່ຍຸກໃໝ່ແຫ່ງການເຊື່ອມໂຍງເຊື່ອມຈອດກັນ.

4 ປີກວ່າຜ່ານຜ່າ, ເສັ້ນທາງລົດໄຟສາຍນີ້ໄດ້ກາຍເປັນພະລັງຂັບເຄື່ອນທີ່ສຳຄັນທີ່ຊຸກຍູ້ການພັດທະນາຂົງເຂດຕ່າງໆຂອງລາວຢ່າງຕໍ່ເນື່ອງ. ຕົ້ນທຶນດ້ານການຂົນສົ່ງລະຫວ່າງນະຄອນຫຼວງວຽງຈັນຂອງລາວ ແລະ ນະຄອນຄຸນໝິງຂອງຈີນໄດ້ຫຼຸດລົງຢ່າງຫຼວງຫຼາຍ, ປະສິດທິພາບດ້ານການຈໍລະຈອນສິນຄ້າໄດ້ເພີ່ມຂຶ້ນຢ່າງຈະແຈ້ງ ເຊິ່ງໄດ້ອຳນວຍຄວາມສະດວກຢ່າງຫຼວງຫຼາຍໃຫ້ແກ່ການແລກປ່ຽນ ແລະ ຮ່ວມມືລະຫວ່າງວິສາຫະກິດສອງປະເທດ. ມີຫຼາຍວິສາຫະກິດໄດ້ລົງທຶນຢູ່ເຂດລຽບຕາມເສັ້ນທາງລົດໄຟ, ສູນຈໍລະຈອນສິນຄ້າ ແລະ ສວນອຸດສາຫະກຳໄດ້ປະກົດຕົວຂຶ້ນຢູ່ລຽບຕາມເສັ້ນທາງລົດໄຟເລື້ອຍໆ.

ທ່ານ ອະນົງເດດ ເພັດໄກສອນ ເຊື່ອໝັ້ນວ່າ: ພາຍໃຕ້ສະພາບການທີ່ ຈີນ ແລະ ລາວ ສືບຕໍ່ລົງເລິກການຮ່ວມມືໃນຂົງເຂດຈໍລະຈອນສິນຄ້າ, ການຄ້າ, ການກໍ່ສ້າງພື້ນຖານໂຄງລ່າງ ແລະ ການເຊື່ອມໂຍງເຊື່ອມຈອດດ້ານອຸດສາຫະກຳ, "ເສັ້ນທາງຄຳດ້ານການຂົນສົ່ງ" ສາຍນີ້ຈະກາຍເປັນເວທີໝັ້ນແກ່ນໃນການຊຸກຍູ້ຄວາມຈະເລີນຮຸ່ງເຮືອງຂອງພາກພື້ນພ້ອມທັງຊຸກຍູ້ການຂົນສົ່ງສິນຄ້າແລະເພີ່ມຄວາມເຂົ້າໃຈລະຫວ່າງປະຊາຊົນຂອງພາກພື້ນ.

ທ່ານ ລູກວາງເຊີ້ງ ຈາກ ສປ ຈີນ: ການຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງເຊື່ອມໂຍງເຂົ້າກັບຊີວິດປະຈຳວັນຂອງປະຊາຊົນ

ທ່ານ ລູກວາງເຊີ້ງ ຜູ້ອຳນວຍການໃຫຍ່ວິທະຍາໄລການພົວພັນສາກົນ ທັງໜ້າສູນຄົ້ນຄວ້າອະນຸພາກພື້ນແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງມະຫາວິທະຍາໄລຢຸນນານກ່າວວ່າ: ນັບແຕ່ເລີ່ມຕົ້ນການຮ່ວມມືເສດຖະກິດອະນຸພາກພື້ນແມ່ນ້ຳຂອງປີ 1992 ເຖິງການຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງໃນປັດຈຸບັນ, ການຮ່ວມມືລະຫວ່າງຈີນ ແລະ ບັນດາປະເທດລຸ່ມແມ່ນ້ຳຂອງໄດ້ຈາກການຮ່ວມມືໃນຂົງເຂດເສດຖະກິດຂະຫຍາຍໄປເຖິງຂົງເຂດການເມືອງ, ຂົງເຂດຄວາມໝັ້ນຄົງ, ຂົງເຂດການພັດທະນາສັງຄົມ ແລະ ອື່ນໆ. ຍ້ອນວ່າກົນໄກການຮ່ວມມືໄດ້ຂະຫຍາຍຕົວກ້າວສູ່ລວງເລິກເລື້ອຍໆ, ເຮັດໃຫ້ການຮ່ວມມືລະຫວ່າງ 6 ປະເທດມີການຮັບປະກັນດ້ານລະບຽບການ ແລະ ສ້າງພື້ນຖານທີ່ໝັ້ນແກ່ນໃຫ້ແກ່ການລົງເລິກການຮ່ວມມືເຊິ່ງກັນ ແລະ ກັນ.

ທ່ານ ລູກວາງເຊີ້ງ ເຫັນວ່າ: 10 ປີຜ່ານມາ, ການຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງໄດ້ຈາກການຮ່ວມມືລະຫວ່າງລັດຖະບານກາຍເປັນການຮ່ວມມືແບບຄົບວົງຈອນທີ່ຂະຫຍາຍໄປສູ່ທຸກລະດັບໃນສັງຄົມ ແລະ ໄດ້ເຊື່ອມໂຍງເຂົ້າກັບຊີວິດປະຈຳວັນຂອງປະຊາຊົນ. ນັກສຶກສາ 7.000 ກວ່າຄົນ ຈາກບັນດາປະເທດລຸ່ມແມ່ນ້ຳຂອງໄດ້ມາສຶກສາຮ່ຳຮຽນຢູ່ແຂວງຢຸນນານ, ໂຄງການສ້າງຜົນປະໂຫຍດໃຫ້ແກ່ປະຊາຊົນ "ນ້ອຍ ແລະ ງາມ" ຫຼາຍໂຄງການໄດ້ຮັບການຈັດຕັ້ງປະຕິບັດຢູ່ປະເທດຕ່າງໆ, ການຮ່ວມມືໃນຂົງເຂດຫຼຸດຜ່ອນຄວາມທຸກຍາກ ແລະ ຂົງເຂດອາຊີວະສຶກສາໄດ້ຂະຫຍາຍຕົວກ້າວສູ່ລວງເລິກຢ່າງຕໍ່ເນື່ອງ.

ແຂວງຢຸນນານແມ່ນແຂວງໜຶ່ງຂອງຈີນໄດ້ນຳໜ້າການຮ່ວມມືກັບບັນດາປະເທດລຸ່ມແມ່ນ້ຳຂອງ. ທ່ານລູກວາງເຊີ້ງ ກ່າວວ່າ: ແຂວງຢຸນນານແມ່ນຜູ້ເຂົ້າຮ່ວມ ແລະ ຜູ້ຊຸກຍູ້ການຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ. ແຂວງຢຸນນານໄດ້ຫັນປ່ຽນທ່າແຮງດ້ານທີ່ຕັ້ງພູມສາດມາເປັນຜົນປະໂຫຍດດ້ານການພັດທະນາ ເຊິ່ງບໍ່ພຽງແຕ່ເຮັດໃຫ້ການຮ່ວມມືມີລະດັບສູງກວ່າເກົ່າ ແລະ ເຮັດໃຫ້ການຮ່ວມມືໄດ້ສ້າງຜົນປະໂຫຍດຕົວຈິງກວ່າເກົ່າ.

ນາງ ຈາກສະຫະພາບມຽນມາ: ມີເພື່ອນມິດຫຼາຍຂຶ້ນແລ້ວເສັ້ນທາງກໍຈະກວ້າງຂວາງກວ່າເກົ່າ

ເວົ້າສຳລັບ ເຈົ້າໜ້າທີ່ການທູດມຽນມາແລ້ວວ່າ, ການຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງແມ່ນຄຳສັບທີ່ປະກົດອອກມາເລື້ອຍໆໃນເອກະສານ ຫຼື ຫົວຂໍ້ທີ່ປຶກສາຫາລືກັນຢ່າງເປັນຈຸດສຸມໃນກອງປະຊຸມຕ່າງໆ, ຮູ້ສຶກວ່າໄກຈາກຊີວິດຂອງຕົນຫຼາຍ. "ຈົນເຖິງໄລຍະທີ່ຂ້າພະເຈົ້າເດີນທາງມາຮຽນພາສາຈີນຢູ່ແຂວງຢຸນນານຂອງຈີນ, ທຸກສິ່ງທຸກຢ່າງຮູ້ສຶກວ່າໃກ້ຊິດຕິດແທດກັບຊີວິດຂອງຂ້າພະເຈົ້າ."

ນາງໄດ້ຕັ້ງໃຈຮຽນການຜັນສຽງ ແລະ ໄວຍາກອນຈີນຢ່າງຈິງຈັງ, ຈາກຄຳສັບ "Nihao" ແລະ "Xiexie", ຈົນເຖິງນາງສາມາດແລກປ່ຽນກັບໝູ່ຮ່ວມຫ້ອງດ້ວຍພາສາຈີນຢ່າງກ້າຫານ. ຂະບວນການດັ່ງກ່າວເໝືອນດັ່ງນາງໄດ້ກ່າຍຂົວດ້ວຍຕົນເອງ. ນາງກ່າວວ່າ: "ໂດຍຜ່ານຈາກຂົວພາສາ, ຂ້າພະເຈົ້າໄດ້ສຳຜັດກັບຊີວິດຕົວຈິງຂອງຊາວຈີນ, ສຳຜັດກັບຄວາມກະຕືລືລົ້ນ, ຄວາມສຸຈະລິດ ແລະ ຄວາມຈິງໃຈຂອງຊາວຈີນ."

ຫວ່າງມໍ່ໆມານີ້, ນາງໄດ້ຮຽນສຸພາສິດຈີນທີ່ວ່າ: "ຖ້າມີເພື່ອນມິດຫຼາຍຂຶ້ນແລ້ວເສັ້ນທາງກໍຈະກວ້າງຂວາງກວ່າເກົ່າ, ຖ້າຮຽນພາສາຕ່າງປະເທດໄດ້ດີແລ້ວກໍຈະແລກປ່ຽນກັບຊາວຕ່າງປະເທດໄດ້ດີກວ່າເກົ່າ." ນາງກ່າວວ່າ: "ຂໍໃຫ້ພວກເຮົາຖືເອົາພາສາເປັນຂົວຕໍ່ ເພື່ອຮ່ວມກັນສ້າງອະນາຄົດແມ່ນ້ຳລ້ານຊ້າງແມ່ນ້ຳຂອງທີ່ດີງາມກວ່າເກົ່າ."

ນາງ ຈາກຣາຊະອານາຈັກໄທ: ຢູ່ແຂວງຢຸນນານຈະສາມາດໄປຢາມພີ່ນ້ອງເພື່ອນມິດທຸກມື້

ໃນຊຸມປີຜ່ານມາ, ນາງເຈົ້າຂອງບລອກໄທ ທີ່ດຳລົງຊີວິດຢູ່ແຂວງຢຸນນານຈີນ ໄດ້ເຂົ້າຮ່ວມການຖ່າຍທຳຟິມສາລະຄະດີສັ້ນພາສາໄທທີ່ພາດຫົວຂໍ້ວ່າ "ໄປ, ໄປຢາມໝູ່ເພື່ອນ" ມາໂດຍຕະຫຼອດ, ນາງໄດ້ເຂົ້າຮ່ວມກິດຈະກຳແລກປ່ຽນດ້ານວັດທະນະທຳຕ່າງໆ ແລະ ໄປຢາມຄອບຄົວຊາວຢຸນນານທີ່ແຕກຕ່າງກັນ.

ຍ້ອນວ່ານາງມັກໄປຢາມໝູ່ເພື່ອນ, ນາງເໝືອນດັ່ງໄດ້ສະຫຼອງບຸນທຸກມື້ ແລະ ມີຄອບຄົວທີ່ເປັນຊາວຢຸນນານ. ເດືອນຕຸລາຂອງປີກາຍນີ້, ນາງໄດ້ເດີນທາງໄປສະຫຼອງງານລ້ຽງໂຕະຍາວເຜົ່າຮານີຢູ່ເມືອງລຸຍຊຸນກິ່ງແຂວງປົກຄອງຕົນເອງເຜົ່າຮານີ ແລະ ເຜົ່າຢີຫົງເຫີ, ໂຕະພັນກວ່າໜ່ວຍໄດ້ລຽນເປັນແຖວຢູ່ຕາມຖະໜົນ, ຮູ້ສຶກເປັນງານລ້ຽງທີ່ໃຫຍ່ໂຕມະໂຫລານທີ່ສຸດ.

ນາງກ່າວວ່າ: ໃນການຢາມໝູ່ເພື່ອນທຸກເທື່ອ, ນາງບໍ່ພຽງແຕ່ໄດ້ຮັບຮູ້ຢຸນນານໄດ້ດີກວ່າເກົ່າ, ຍັງໄດ້ບັນລຸຄວາມຝັນຂອງຕົນໃນການເຂົ້າຮ່ວມກິດຈະກຳຕ່າງໆຢູ່ປະເທດຈີນ.

ທ່ານ ຈາກຣາຊະອານາຈັກກຳປູເຈຍ: ກິດຈະກຳ "ມອບຄວາມຮັກແພງ" ເຕັມໄປດ້ວຍຄວາມຮັກແພງ ແລະ ຄວາມອົບອຸ່ນ

ຫຼາຍປີຜ່ານມາ, ໂຮງໝໍຫຼອດເລືອດຫົວໃຈຟູວາຍແຂວງຢຸນນານ ໄດ້ດຳເນີນກິດຈະກຳ "ມອບຄວາມຮັກແພງ" ທີ່ມີຈຸດປະສົງກວດກາ ແລະ ປິ່ນພະຍາດໃຫ້ແກ່ເດັກນ້ອຍທີ່ມີພະຍາດຫົວໃຈຕັ້ງແຕ່ເກີດ. ທ່ານ ຮອງເຈົ້າເມືອງເມືອງ, ແຂວງຊຽມລຽບ ກຳປູເຈຍ ເຄີຍເດີນທາງໄປໂຮງຮຽນຫຼາຍຫຼັງຂອງກຳປູເຈຍ ເພື່ອປະສານງານຮັບເອົາເດັກນ້ອຍທີ່ມີພະຍາດຫົວໃຈຕັ້ງແຕ່ເກີດໄປຮັບການປິ່ນປົວຢູ່ແຂວງຢຸນນານ. ທ່ານເຫັນວ່າ: ກິດຈະກຳດັ່ງກ່າວເປັນກິດຈະກຳທີ່ມີຄວາມອົບອຸ່ນ ແລະ ມີຊີວິດຊີວາທີ່ສຸດໃນຂອບການຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ.

ທ່ານ ໄດ້ເລົ່າເລື່ອງຂອງທ້າວ ເດັກນ້ອຍກຳປູເຈຍ: ທ້າວເຄີຍໄດ້ໄປຮັບປິ່ນປົວຢູ່ແຂວງຢຸນນານໃນປີ 2018, ປັດຈຸບັນ, ໄດ້ເປັນນັກສຶກສາແລ້ວ. ທ້າວ ກ່າວວ່າ: "ຂ້າພະເຈົ້າຮູ້ສຶກຄວາມຮັກແພງ ແລະ ຄວາມສຸຈະລິດບໍ່ມີພົມແດນຢ່າງແທ້ຈິງ.

ທ່ານ ກ່າວຕື່ມວ່າ: ກິດຈະກຳ "ມອບຄວາມຮັກແພງ" ບໍ່ພຽງແຕ່ເປັນການປິ່ນປົວທາງການແພດເທົ່ານັ້ນ, ຍັງເປັນຂົວມິດຕະພາບ ທີ່ເຊື່ອມຕໍ່ປະຊາຊົນສອງຊາດກຳປູເຈຍ-ຈີນ.

ນາງ ຈາກ ສສ ຫວຽດນາມ: ຂະບວນການເຊື່ອມໂຍງເຂົ້າກັນຂອງພາກພື້ນແມ່ນບັນຫາສຳຄັນທີ່ສຸດໃນການບັນລຸການຫັນປ່ຽນເປັນສີຂຽວ

ນາງ ອາຈານສອນໃນວິທະຍາໄລການບໍລິຫານອຸດສາຫະກຳ ແລະ ພະລັງງານມະຫາວິທະຍາໄລພະລັງງານໄຟຟ້າຫວຽດນາມກ່າວວ່າ: ຫວຽດນາມພວມເລັ່ງຂະບວນການຫັນມາໃຊ້ພະລັງງານສີຂຽວ. ລັດຖະບານຫວຽດນາມ ໄດ້ອະນຸມັດແຜນທີ່ເສັ້ນທາງພັດທະນາພະລັງງານສະບັບໃໝ່ ເຊິ່ງມີຈຸດປະສົງຍົກຄວາມສາມາດຜະລິດໄຟຟ້າດ້ວຍພະລັງງານໝູນວຽນ ແລະ ຫຼຸດການປ່ອຍກາກບອນ.

ນາງ ກ່າວວ່າ: "ຂະບວນການເຊື່ອມໂຍງເຂົ້າກັນຂອງພາກພື້ນແມ່ນບັນຫາສຳຄັນທີ່ສຸດໃນການບັນລຸການຫັນປ່ຽນເປັນສີຂຽວ." ຫວຽດນາມພວມເພີ່ມທະວີການເຊື່ອມຕໍ່ຕາຂ່າຍໄຟຟ້າກັບລາວ, ກຳປູເຈຍ ແລະ ຈີນ ເພື່ອເປີດກວ້າງຊ່ອງທາງສະໜອງພະລັງງານ.

ນາງ ກ່າວຕື່ມວ່າ: ການຮ່ວມມືໃນຂົງເຂດສາຍສົ່ງໄຟຟ້າດ້ວຍຂະໜາດໄຟຟ້າສູງພິເສດ ແລະ ຕາຂ່າຍໄຟຟ້າອັດສະລິຍະລະຫວ່າງ ຫວຽດນາມ ແລະ ຈີນ ໄດ້ຍົກຖານະໃນພາກພື້ນຂອງຫວຽດນາມໃຫ້ສູງຂຶ້ນ .

(ສະໜອງຂໍ້ມູນໂດຍ: ວາລະສານ "ຈຳປາ" ທີ່ຂຶ້ນກັບສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)

ynzhanba@163.com
laos.yunnangateway.com